# ນະໂຍບາຍການປະຕິບັດວຽກງານ

| | | | |
|---|---|---|---|
| **ປະເພດ:** | ການເງິນ | **ລະຫັດ:** | CH-C-55 |
| | | **ມີຜົນບັງຄັບໃຊ້:** | 12/2017 |
| **ຫົວຂໍ້T:** | ການຮຽກເກັບເງິນ ແລະການທວງໜີ້ | **ການປ່ຽນແທນ:** | --- |
| | | **ໜ້າ:** | 1 ຈາກ 6 |

## ຈຸດປະສົງ

ນະໂຍບາຍນີ້ນຳໃຊ້ກັບ Loma Linda University Children's Hospital ("LLUCH") ພ້ອມກັບນະໂຍບາຍການຊ່ວຍເຫຼືອທາງການເງິນ (Financial Assistance Policy, FAP), ໂດຍມີເຈດຕະນາເພື່ອໃຫ້ເປັນໄປຕາມຂໍ້ກຳນົດຂອງກົດໝາຍຣັຖບານກາງ, ຣັຖ, ແລະກົດໝາຍທ້ອງຖິ່ນ, ລວມເຖິງ, ແຕ່ບໍ່ຈຳກັດຢູ່ແຕ່, ມາດຕາ 501(r) ຂອງກົດໝາຍວ່າດ້ວຍການເກັບພາສີອາກອນ (Internal Revenue Code, IRC) ຂອງປີ 1986, ສະບັບແກ້ໄຂ, ແລະກົດລະບຽບທີ່ຢູ່ໃນນັ້ນ. ນະໂຍບາຍນີ້ເປັນການຈັດຕັ້ງການປະຕິບັດທີ່ອາດຈະດຳເນີນການໃນກໍລະນີຂອງການບໍ່ຈ່າຍເງິນຄ່າປິ່ນປົວທີ່ຈັດຫາໃຫ້ໂດຍທາງ LLUCH ລວມເຖິງ ແຕ່ບໍ່ຈຳກັດຢູ່ແຕ່ ການດຳເນີນການທວງໜີ້ພິເສດ (Extraordinary Collection Actions, ECA). LLUCH ຈະບໍ່ປະຕິເສດການເບິ່ງແຍງແບບສຸກເສີນ ຫຼື ການປິ່ນປົວທີ່ຈຳເປັນອື່ນໆ ໂດຍອີງໃສ່ຄວາມສາມາດໃນການຈ່າຍ. ຫຼັກການຊີ້ນຳຕ່າງໆ ທີ່ຢູ່ໃນນະໂຍບາຍນີ້ແມ່ນເພື່ອປະຕິບັດຕໍ່ຄົນເຈັບທຸກຄົນ ແລະບຸກຄົນຕ່າງໆ ທີ່ຮັບຜິດຊອບຢ່າງເທົ່າທຽມກັນພ້ອມດ້ວຍຄວາມເຄົາລົບ ແລະມີກຽດ ແລະແມ່ນເພື່ອຮັບປະກັນວ່າ ມີການປະຕິບັດຕາມຂັ້ນຕອນຂອງການຮຽກເກັບເງິນແລະການເກັບທວງໜີ້ທີ່ເໝາະສົມ ແລະເພື່ອໃຫ້ໝັ້ນໃຈວ່າ ໄດ້ມີການພະຍາຍາມຢ່າງສົມເຫດຜົນໃນການພິຈາລະນາຕັດສິນວ່າ ບຸກຄົນທີ່ຮັບຜິດຊອບໃນການຈ່າຍເງິນທັງໝົດ ຫຼື ຈ່າຍເງິນບາງສ່ວນໃນບັນຊີຂອງຄົນເຈັບນັ້ນແມ່ນມີ ເງື່ອນໄຂເໝາະສົມທີ່ຈະໄດ້ຮັບການຊ່ວຍເຫຼືອພາຍໃຕ້ໂຄງການ FAP ຫຼືບໍ່.

LLUCH ມຸ່ງໝັ້ນໃນການຊ່ວຍເຫຼືອບັນດາຄົນເຈັບຜູ້ທີ່ມີ ແລະບໍ່ມີປະກັນພັຍ ໃຫ້ບັນລຸກົດເກນຂໍ້ບັງຄັບດ້ານການຊຳລະເງິນຂອງເຂົາເຈົ້າ ແລະມຸ່ງໝັ້ນໃນການນຳໃຊ້ແນວທາງປະຕິບັດດ້ານການຮຽກເກັບເງິນ ແລະການທວງໜີ້ທີ່ສະໝ່ຳສະເໝີ ແລະສອດຄ່ອງກັນ ຕໍ່ຄົນເຈັບທຸກຄົນທີ່ມີສິດເໝາະສົມ ສຳລັບການຊ່ວຍເຫຼືອພາຍໃຕ້ໂຄງການ FAP

## A. ການພິຈາລະນາດ້ານການເງິນ ແລະການຮຽກເກັບເງິນ

1. LLUCH ຈະບໍ່ເຂົ້າໄປມີສ່ວນພົວພັນໃນ ECA, ທັງໂດຍທາງກົງ ຫຼື ຜ່ານຜູ້ໃຫ້ບໍລິການທີ່ໄດ້ຮັບອະນຸຍາດຂອງຕົນ, ກ່ອນທີ່ຈະພະຍາຍາມຢ່າງສົມເຫດຜົນໃນການພິຈາລະນາຕັດສິນວ່າ ຄົນເຈັບນັ້ນມີສິດເໝາະສົມທີ່ຈະໄດ້ຮັບການຊ່ວຍເຫຼືອພາຍໃຕ້ໂຄງການ LLUCH FAP.

2. ມັນແມ່ນຂໍ້ບັງຄັບສໍາລັບຄົນເຈັບ ຫຼື ຜູ້ຮັບປະກັນ (ອ້າງເຖິງໃນບ່ອນນີ້ໃນຖານະ "ຄົນເຈັບ") ໃນການໃຫ້ທີ່ຢູ່ທາງໄປສະນີທີ່ຖືກຕ້ອງ ແລະເບີໂທຣະສັບທີ່ຖືກຕ້ອງ ໃນເວລາທີ່ຮັບບໍລິການ ຫຼື ໃນ ເວລາທີ່ມີການຍ້າຍ. ຖ້າວ່າ ບັນຊີບໍ່ມີທີ່ຢູ່ທີ່ໃຊ້ການໄດ້ ຫຼືເບີໂທຣະສັບ, ມັນອາດສົ່ງຜົນກະທົບຕໍ່ການພິຈາລະນາຕັດສິນກ່ຽວກັບການໃຊ້ຄວາມພະຍາຍາມທີ່ສົມເຫດຜົນ.

3. ເພື່ອເປັນການເອື້ອເຟື້ອຕໍ່ບັນດາຄົນເຈັບທີ່ມີປະກັນພັຍ, ການຮຽກຮ້ອງຂໍສິນທົດແທນຄັ້ງທໍາອິດນັ້ນຈະຖືກຍື່ນກັບບໍລິສັດປະກັນພັຍຂອງເຂົາເຈົ້າ. ຜູ້ຈ່າຍເງິນລໍາດັບທີສອງ ແລະ ຫຼື ທີສາມ ຈະໄດ້ຮັບຄໍາຮຽກຮ້ອງຂໍສິນທົດແທນຈາກ LLUCH ຫຼື ຕົນແທນທີ່ໄດ້ຮັບອະນຸຍາດຂອງເຂົາເຈົ້າ ໃນນາມຂອງຄົນເຈັບ ຫຼັງຈາກໄດ້ດໍາເນີນການແກ້ໄຂບັນຫາການຈ່າຍສິນທົດແທນສໍາເລັດແລ້ວກັບຜູ້ຈ່າຍ ປະກັນພັຍຫຼັກ. ບັນດາຄົນເຈັບທີ່ບໍ່ມີປະກັນພັຍຈະຖືກຮຽກເກັບເງິນໂດຍກົງສໍາລັບການຮຽກຮ້ອງຂໍສິນທົດແທນຂອງເຂົາເຈົ້າໂດຍ LLUCH.

4. ເມື່ອທັງການແກ້ໄຂການຮຽກຮ້ອງສິນທົດແທນຈາກປະກັນພັຍຫຼັກ ແລະປະກັນພັຍທີສອງໄດ້ເກີດຂຶ້ນ, ບັນຊີທັງໝົດບໍ່ວ່າຈະມີປະກັນພັຍ ຫຼືບໍ່ມີກໍຕາມ ຈະຕ້ອງດໍາເນີນການຕາມຂັ້ນຕອນການເກັບທວງເງິນອັນດຽວກັນສໍາລັບໜີ້ຍັງເຫຼືອຂອງຄົນເຈັບທີ່ຄົບກໍານົດຊໍາລະກັບ LLUCH.

4.1 LLUCH ຫຼື ຕົນແທນທີ່ໄດ້ຮັບອະນຸຍາດຈະບໍ່ມີສ່ວນຮ່ວມໃນ ECA ຈົນກວ່າ 150 ວັນຫຼັງຈາກວັນທີຂອງການອອກໃບບິນເກັບຄ່າເບິ່ງແຍງຫຼັງການອອກຈາກໂຮງໝໍຄັ້ງທໍາອິດ ແລະກ່ອນທີ່ຈະມີການດໍາເນີນການພະຍາຍາມຢ່າງສົມເຫດຜົນໃນການພິຈາລະນາວ່າ ຄົນເຈັບມີສິດເໝາະສົມທີ່ຈະໄດ້ຮັບການຊ່ວຍເຫຼືອດ້ານການເງິນພາຍໃຕ້ໂຄງການ FAP ຫຼືບໍ່.

4.2 LLUCH ຫຼືຕົວແທນທີ່ໄດ້ຮັບອະນຸຍາດຂອງຕົນຈະໃຫ້ໃບແຈ້ງໜີ້ແກ່ຄົນເຈັບສີ່ (4) ໃບຜ່ານທາງໄປສະນີ ລວມເຖິງແຈ້ງການທີ່ລະບຸວ່າມີໂຄງການການຊ່ວຍເຫຼືອທາງການເງິນໃຫ້ແກ່ຄົນເຈັບ ແລະພະຍາຍາມໂທຣຫາຄົນເຈັບຢ່າງໜ້ອຍໜຶ່ງ (1) ຄັ້ງ ຊຶ່ງເປັນຊ່ວງ ເວລາທີ່ LLUCH ຫຼື ຕົວແທນທີ່ໄດ້ຮັບອະນຸຍາດ ຈະສາມາດແຈ້ງໃຫ້ຄົນເຈັບຮູ້ກ່ຽວກັບໂຄງການ FAP.

4.3 ຢ່າງໜ້ອຍສາມສິບ (30) ວັນກ່ອນເລີ່ມດໍາເນີນການ ECA ໃດໆ, ທາງ LLUCH ຫຼື ຕົວແທນທີ່ໄດ້ຮັບອະນຸຍາດຂອງຕົນຈະ:

a. ໃຫ້ແຈ້ງການແກ່ຄົນເຈັບກ່ຽວກັບ ECA ຊຶ່ງ LLUCH ເຈດຕະນາທີ່ຈະເລີ່ມດໍາເນີນການທວງເກັບເອົາເງິນສໍາລັບການເບິ່ງແຍງ.

b. ໃຫ້ເອກະສານສະຫຼຸບແກ່ຄົນເຈັບໃນພາສາທີ່ເຂົ້າໃຈງ່າຍກ່ຽວກັບໂຄງການ FAP.

c. ພະຍາຍາມຕິດຕໍ່ດ້ວຍວາຈາກັບຄົນເຈັບ ຜ່ານທາງໂທຣະສັບຕາມເບີໂທຣະສັບທີ່ຮູ້

ຫຼ້າສຸດ..

4.4 ໃນກໍລະນີທີ່ບໍ່ຈ່າຍເງິນ ແລະຫຼັງຈາກໄດ້ພະຍາຍາມຢ່າງສົມເຫດຜົນແລ້ວໃນການແຈ້ງແກ່ຄົນເຈັບກ່ຽວກັບໂຄງການຊ່ວຍເຫຼືອທາງການເງິນທີ່ມີໃຫ້, ທາງ LLUCH ຫຼືຕົວແທນທີ່ໄດ້ຮັບອະນຸຍາດອາດລິເລີ່ມການທວງໜີ້ທີ່ 150 ວັນ ຫຼັງຈາກວັນທີຂອງໃບແຈ້ງໜີ້ຫຼັງອອກຈາກໂຮງໝໍຄັ້ງທຳອິດ.

4.5 ໃນກໍລະນີທີ່ໄດ້ຮັບໃບສະໝັກຂໍການຊ່ວຍເຫຼືອທາງການເງິນ (Financial Assistance Application, FAA) ໃນລະຫວ່າງຊ່ວງການຮັບສະໝັກ, ທາງ LLUCH ຈະລະງັບ ECA ໃນຂະນະທີ່ເຂົາເຈົ້າພະຍາຍາມທີ່ຈະພິຈາລະນາຕັດສິນວ່າ ຄົນເຈັບມີສິດເໝາະສົມສຳລັບການຊ່ວຍເຫຼືອທາງການເງິນພາຍໃຕ້ໂຄງການ FAP ຫຼືບໍ່. ໃນກໍລະນີທີ່ໃບສະໝັກ FAA ບໍ່ຄົບຖ້ວນຊຶ່ງໄດ້ຮັບໃນລະຫວ່າງຊ່ວງການຮັບສະໝັກ, ECA ຈະຖືກລະງັບຊົ່ວຄາວບໍ່ເກີນສາມສິບ (30) ວັນ ໃນຂະນະທີ່ LLUCH ໃຫ້ໜັງສືແຈ້ງການແກ່ຄົນເຈັບວ່າ ອາດມີການລິເລີ່ມດຳເນີນການ ECA ຫຼື ການດຳເນີນການໃໝ່ ຖ້າວ່າ ໃບສະໝັກໂຄງການ FAA ບໍ່ຄົບຖ້ວນສົມບູນ. ການດຳເນີນການທວງໜີ້ຈະກັບຄືນມາດຳເນີນການໃໝ່ອີກໃນສະຖານະການຕໍ່ໄປນີ້: (i) ມີການດັດປັບບາງສ່ວນເກີດຂຶ້ນ, (ii) ຄົນເຈັບບົກຜ່ອງບໍ່ໃຫ້ຄວາມຮ່ວມມືກັບຂັ້ນຕອນຂອງການຊ່ວຍເຫຼືອທາງການເງິນ, ຫຼື (iii) ຄົນເຈັບບໍ່ມີສິດເໝາະສົມສຳລັບການຊ່ວຍເຫຼືອທາງການເງິນ.

4.6 ຖ້າວ່າຜູ້ໃຫ້ບໍລິການຝ່າຍທີສາມ ຫຼື ອົງການທວງໜີ້ລະບຸວ່າ ຄົນເຈັບມີເງື່ອນໄຂກົງຕາມເກນການຊ່ວຍເຫຼືອທາງການເງິນຂອງ LLUCH, ບັນຊີຂອງຄົນເຈັບອາດໄດ້ຮັບການພິຈາລະນາສຳລັບການຊ່ວຍເຫຼືອທາງການເງິນ. ການດຳເນີນການ ECA ຈະຖືກລະງັບເປັນເວລາບໍ່ເກີນສາມສິບ (30) ວັນ ໃນຂະນະທີ່ LLUCH ຈະໃຫ້ໜັງສືແຈ້ງການແກ່ຄົນເຈັບວ່າ ອາດມີການລິ່ເລີ່ມດຳເນີນການ ECA ຫຼື ກັບຄືນມາດຳເນີນການໃໝ່ ຖ້າວ່າໃບສະໝັກໂຄງການ FAA ບໍ່ສົມບູນຄົບຖ້ວນ. ການດຳເນີນການທວງໜີ້ຈະກັບຄືນມາດຳເນີນການໃໝ່ອີກໃນສະຖານະການຕໍ່ໄປນີ້: (i) ມີການດັດປັບບາງສ່ວນເກີດຂຶ້ນ, (ii) ຄົນເຈັບບົກຜ່ອງບໍ່ໃຫ້ຄວາມຮ່ວມມືກັບຂັ້ນຕອນຂອງການຊ່ວຍເຫຼືອທາງການເງິນ, ຫຼື (iii) ຄົນເຈັບບໍ່ມີສິດເໝາະສົມສຳລັບການຊ່ວຍເຫຼືອທາງການເງິນ.

5. ໃນເວລາໃດໆ ກໍຕາມໃນລະຫວ່າງຮອບການທວງໜີ້ນັ້ນ ບັນດາຄົນເຈັບສາມາດສົ່ງຂໍ້ມູນດ້ານການເງິນເພື່ອຂໍຮັບການພິຈາລະນາການຊ່ວຍເຫຼືອທາງການເງິນຊຶ່ງສອດຄ່ອງຕາມໂຄງການ LLUCH FAP. ແຫຼ່ງຊ່ວຍເຫຼືອທັງໝົດທີ່ມີໃຫ້ ແລະການຈ່າຍເງິນທີ່ມີໃຫ້ຈາກຜູ້ຈ່າຍຝ່າຍທີສາມຕ້ອງໄດ້ຖືກນຳໃຊ້ໝົດກ່ອນທີ່ຈະມີການພິຈາລະນາການຊ່ວຍເຫຼືອດັ່ງກ່າວນັ້ນ.

6. ບັນດາຄົນເຈັບແມ່ນຖືກຊຸກຍູ້ຜ່ານເວັບໄຊແລະການສື່ສານໂຕ້ຕອບກັບ LLUCH ເພື່ອດຳເນີນການຈັດການດ້ານການຈ່າຍເງິນ ໂດຍສອດຄ່ອງຕາມ LLUCH FAP ໃນກໍລະນີທີ່ການຈ່າຍເງິນຈຳນວນເຕັມບໍ່

ສາມາດເປັນໄປໄດ້.

## B. ມາດຕະການໃນການເຜີຍແຜ່ນະໂຍບາຍດ້ານການຮຽກເກັບເງິນ ແລະການທວງໜີ້

1. ບັນດາສຳເນົາຂອງນະໂຍບາຍການຮຽກເກັບເງິນ ແລະການທວງໜີ້, ນະໂຍບາຍການຊ່ວຍເຫຼືອທາງການເງິນ (Financial Assistance Policy, FAP), ບົດສະຫຼຸບໃນພາສາທີ່ເຂົ້າໃຈງ່າຍຂອງໂຄງການ FAP, ແລະໃບສະໝັກໂຄງການຊ່ວຍເຫຼືອທາງການເງິນ (Financial Assistance Application, FAA) ຈະຖືກເຜີຍແຜ່ຢ່າງກວ້າງຂວາງ ແລະສາມາດຂໍເອົາໄດ້ໃນຮູບແບບຕໍ່ໄປນີ້:

   **1.1** **ທາງອອນໄລນ໌** ທີ່ເວັບໄຊ LLUCH, https://medical-center.lomalindahealth.org/financial-assistance#lluch

   **1.2** **ໂດຍທາງໂທຣະສັບ** ທີ່ສູນບໍລິການລູກຄ້າຂອງ LLUCH ທີ່ເບີໂທຣ (909) 651-4177

   **1.3** **ໂດຍທາງໄປສະນີ** ທີ່ສູນບໍລິການລູກຄ້າ LLUCH:

   P.O. Box 700
   Loma Linda, CA 92354

   **1.4** **ໂດຍຕິດປະກາດໄວ້ ແລະສຳເນົາເອກະສານ ຫຼື ໃບປິວໂຄສະນາ** ໃນພະແນກສຸກເສີນຕ່າງໆ, ບ່ອນຮັບຄົນເຈັບ ແລະ ຫ້ອງການທຸລະກິດຕ່າງໆ ຂອງໂຮງໝໍທຸກແຫ່ງຂອງ LLUCH, ໃນພາສາທີ່ເໝາະສົມສຳລັບພື້ນທີ່ບໍລິການຂອງໂຮງໝໍ

   **1.5** **ດ້ວຍຕົນເອງ** ຜ່ານການພົບປະກັບທີ່ປຶກສາດ້ານການເງິນ, ຕາມຄວາມຈຳເປັນ, ກັບບັນດາຄົນເຈັບ ທີ່ໂຮງໝໍຂອງ LLUCH, ແລະດ້ວຍການປຶກສາຫາລືຈາກເຈົ້າໜ້າທີ່ທີ່ໄດ້ຮັບມອບໝາຍ, ເມື່ອເໝາະສົມ.

   **1.6** **ໂດຍໃບແຈ້ງໜີ້** ຊຶ່ງຈະມີເບີໂທຣະສັບເພື່ອສອບຖາມຕ່າງໆ ກ່ຽວກັບການຊ່ວຍເຫຼືອທາງການເງິນ.

## C. ຄຳນິຍາມ

ຊ່ວງການສະໝັກ:
ຊ່ວງລະຍະເວລາທີ່ບຸກຄົນໃດໜຶ່ງສາມາດສະໝັກຂໍຮັບການຊ່ວຍເຫຼືອທາງການເງິນໄດ້. ຊ່ວງການສະໝັກຈະສິ້ນສຸດໃນ 240 ວັນຫຼັງຈາກທາງ LLUCH ສົ່ງຈົດໝາຍ ຫຼື ສົ່ງອີເມວໃຫ້ແກ່ບຸກຄົນນັ້ນພ້ອມກັບໃບ

ແຈ້ງໜີ້ຄ່າເບິ່ງແຍງໃບທຳອິດ, ແຕ່ LLUCH ອາດຂະຫຍາຍເວລາໃຫ້ໃນສະຖານະການພິເສດ.

ຜູ້ໃຫ້ບໍລິການທີ່ໄດ້ຮັບອະນຸຍາດ:
ບັນດາຜູ້ໃຫ້ບໍລິການທີ່ LLUCH ອາດເຮັດສັນຍາດ້ວຍເພື່ອໃຫ້ເຮັດ ແລະສົ່ງຈົດໝາຍ, ແຈ້ງການ, ໃບບິນ ແລະ/ຫຼື ລາຍງານອື່ນໆ ໃຫ້ແກ່ຄົນເຈັບກ່ຽວກັບຈຳນວນເງິນທີ່ຄົນເຈັບຄ້າງໜີ້ ແລະເພື່ອໃຫ້ຕິດຕໍ່ຄົນເຈັບກ່ຽວກັບການຊຳລະເງິນສຳລັບໃບບິນທີ່ຄ້າງຊຳລະ.

ການດຳເນີນການທວງໜີ້ພິເສດ (Extraordinary Collection Action, ECA):
ການປະຕິບັດຕ່າງໆ ທີ່ດຳເນີນການໂດຍ LLUCH ຊຶ່ງຕ້ານກັບບຸກຄົນໃນສ່ວນທີ່ກ່ຽວຂ້ອງກັບການທວງເອົາການຊຳລະເງິນຕາມໃບບິນສຳລັບຄ່າເບິ່ງແຍງຮັກສາຊຶ່ງຢູ່ພາຍໃຕ້ນະໂຍບາຍການຊ່ວຍເຫຼືອທາງການເງິນຂອງ LLUCH ແລະອາດລວມເຖິງສິ່ງຕໍ່ໄປນີ້: (a) ການຂາຍໜີ້ຂອງບຸກຄົນນັ້ນໃຫ້ແກ່ຝ່າຍອື່ນ ຍົກເວັ້ນແຕ່ຈະມີການກຳນົດໄວ້ຢ່າງຊັດເຈນໃນກົດໝາຍຂອງຣັຖບານກາງ; (b) ການລາຍງານຂໍ້ມູນໃນທາງລົບກ່ຽວກັບບຸກຄົນນັ້ນໃຫ້ແກ່ຫ້ອງການເຄຣດິດຜູ້ບໍລິໂພກ; ແລະ (c) ດຳເນີນການບາງຢ່າງທີ່ຕ້ອງມີຂັ້ນຕອນທາງກົດໝາຍ ຫຼື ກະບວນການຍຸດຕິທັມຕາມທີ່ບົ່ງໄວ້ ໃນ ກົດໝາຍຣັຖບານກາງ, ລວມເຖິງ ການໄດ້ສິດໃນການຄອບຄອງຊັບສິນ, ການຍຶດ ອະສັງຫາລິມະຊັບ, ການຍຶດຊັບຕາມຄຳສັ່ງສານ/ການຍຶດຊັບສິນ, ການຟ້ອງຮ້ອງຄະດີ, ຊຶ່ງຈະເປັນສາເຫດເຮັດໃຫ້ບຸກຄົນຖືກໝາຍສານຍຶດເອົາຊັບສິນ, ແລະຖືກອາຍັດຄ່າຈ້າງ. ECA ບໍ່ລວມເຖິງສິດໃນການຄອບຄອງຊັບສິນໃດໆ ທີ່ທາງໂຮງໝໍມີສິດທີ່ຈະອ້າງເອົາພາຍໃຕ້ກົດໝາຍຂອງຣັຖ ຊຶ່ງໄດ້ຈາກການພິພາກສາຕັດສິນ, ການຕົກລົງຊຳລະເງິນ ຫຼື ການຕໍ່ຮອງໜີ້ສິນທີ່ເປັນໜີ້ກັບບຸກຄົນ (ຫຼື ຕົວແທນຂອງບຸກຄົນ) ເນື່ອງຈາກເປັນຜົນມາຈາກການບາດເຈັບສ່ວນຕົວຊຶ່ງໄດ້ຮັບການເບິ່ງແຍງ ຮັກສາຈາກໂຮງໝໍ.

ນະໂຍບາຍການຊ່ວຍເຫຼືອທາງການເງິນ:
ນະໂຍບາຍທີ່ຈັດຕັ້ງຂຶ້ນໂດຍ LLUCH ເພື່ອເປັນ ຂໍ້ກຳນົດສຳລັບການຊ່ວຍເຫຼືອທາງການເງິນໃຫ້ແກ່ບັນດາຄົນເຈັບທີ່ມີສິດເໝາະສົມ ຊຶ່ງມີຄວາມຈຳເປັນທີ່ຕ້ອງໄດ້ຮັບການຊ່ວຍເຫຼືອທາງການເງິນ, ໂດຍສະເພາະແມ່ນໂຄງການ LLUCH FAP.

ປະມວນກົດໝາຍພາສີອາກອນ ມາດຕາ (Internal Revenue Code) 501(r):

ລວມເຖິງ ກົດລະບຽບທີ່ນຳໃຊ້ກັບບັນດາໂຮງໝໍການກຸສົນ.

ການເບິ່ງແຍງທີ່ຈຳເປັນທາງການແພດ:

ການບໍລິການເບິ່ງແຍງສຸຂະພາບຕາມທີ່ນິຍາມໄວ້ໂດຍກົດໝາຍວ່າດ້ວຍສະຫວັດດີການ ແລະສະຖາບັນຂອງຣັຖຄາລິຟໍເນຍ (California Welfare & Institutions Code) §14059.5. ການບໍລິການທີ່ຈຳເປັນທາງການ

ແພດ ຫຼື ມີຄວາມຈຳເປັນໃນທາງການແພດ ແມ່ນໃນກໍລະນີເມື່ອມີເຫດຜົນສົມຄວນ ແລະຈຳເປັນເພື່ອປົກປ້ອງ ຊີວິດ, ເພື່ອປ້ອງກັນການເຈັບທີ່ສຳຄັນ ຫຼື ປ້ອງກັນຄວາມພິການທີ່ສຳຄັນ, ຫຼື ເພື່ອບັນເທົາຄວາມເຈັບປວດຮຸນ ແຮງ." ການບໍລິການທີ່ບໍ່ລວມຢູ່ໃນຄຳອະທິບາຍນີ້ ໄດ້ແກ່ ການບໍລິການສະເພາະຊຶ່ງສາມາດບຳບັດຮັກສາໄດ້ຢ່າງມີ ປະສິດທິພາບໃນທາງການແພດດ້ວຍວິທີການອື່ນ. ຍົກຕົວຢ່າງ ແມ່ນ: 1) ການບໍລິການດ້ານຄວາມງາມ ແລະ/ຫຼື ການຜ່າຕັດເສີມຄວາມງາມ; 2) ການບໍລິການເຮັດໝັນ; 3) ການແກ້ໄຂສາຍຕາ; 4) ການບຳບັດຮັກສາດ້ວຍລັງສີ ໂປຣຕອນ; 5) ການຮັກສາໂດຍໃຊ້ຫຸ່ນຍົນຊ່ວຍ; 6) ອຸປະກອນເສີມຮ່າງກາຍ/ ອຸປະກອນທຽມ; 7) ການຖືພາ ແທນ; ຫຼື 8) ການບໍລິການອື່ນໆ ທີ່ເຮັດເພື່ອຄວາມສະດວກ ແລະ/ຫຼື ຄວາມສະບາຍຂອງຄົນເຈັບເປັນຫຼັກ.

ບົດສະຫຼຸບໃນພາສາທີ່ເຂົ້າໃຈງ່າຍ:

ບົດສະຫຼຸບຂອງ ນະໂຍບາຍການຊ່ວຍເຫຼືອທາງການເງິນ ຊຶ່ງອ່ານງ່າຍ, ເຂົ້າໃຈງ່າຍ ແລະນຳໃຊ້ງ່າຍ.

ເອກະສານອ້າງອີງດ້ານນະໂຍບາຍ

ການເບິ່ງແຍງເພື່ອການກຸສົນ/ການຊຳລະເງິນແບບຫຼຸດລາຄາ (Charity Care/Discount Payment) (CH-C-22)

ຜູ້ອະນຸມັດ: ຄະນະກຳມະການບໍລິຫານ LLUCH, ຜູ້ບໍລິຫານສູງສຸດຂອງ LLUCH, ຄະນະຜູ້ນຳບໍລິຫານຂອງໂຮງໝໍ LLUCH, ຮອງປະທານອາວຸໂສດ້ານການເງິນຂອງ LLUCH